ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ນາຍົກລັດຖະມົນຕີ

ເລກທີ..99......./ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.03.2017.

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກະຊວງກະສິກຳ ແລະ ປ່າໄມ້

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 21/ນຍ, ລົງວັນທີ 11 ເມສາ 2016 ແລະ ຂໍ້ຕົກລົງ ສະບັບເລກທີ 57/ນຍ, ລົງວັນທີ 22 ກໍລະກົດ 2016 ວ່າດ້ວຍການສືບຕໍ່ສັບຊ້ອນບາງວຽກງານຂອງລັດຖະບານ;
- ອີງຕາມໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 118/ກປ, ລົງວັນທີ 06 ກຸມພາ 2017;
- ອີງຕາມໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 37/ພນ, ລົງວັນທີ 14 ກຸມພາ 2017;

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດ ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງກະສິກຳ ແລະ ປ່າໄມ້ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ວຽກພັດທະນາຊົນນະບົດ.